# ທະນາຄານພົງສະຫວັນ ຈຳກັດ

ບົດລາຍງານຖານະການເງິນ ປະຈຳປີ 2014

ໂດຍອີງໃສ່ແບບລາຍງານການເງິນຂອງກົມບັນຊີ-ການເງິນ ຂອງ ທະນາຄານແຫ່ງ ສ ປປ ລາວ

# ທະນາຄານພົງສະຫວັນ ຈຳກັດ

ບົດລາຍງານຂອງຄະນະອຳນວຍການ ແລະ
ເອກະສານລາຍງານການເງິນທີ່ໄດ້ຮັບການກວດສອບແລ້ວ ອີງຕາມກົດໝາຍການບັນຊີຂອງ ສປປ ລາວ
ແລະ ລະບຽບການທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີ
ເອກະສານລາຍງານການເງິນ.

ວັນທີ 31 ທັນວາ 2014

# ທະນາຄານ ພົງສະຫວັນ ຈຳກັດ

## ສາລະບານ


| | ໜ້າ |
|---|---:|
| ຂໍ້ມູນທົ່ວໄປຂອງທະນາຄານ | 1 - 2 |
| ບົດລາຍງານຂອງຄະນະອຳນວຍການ | 3 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 4 - 5 |
| ໃບລາຍງານຜົນໄດ້ຮັບ | 6 |
| ໃບສະຫລຸບຊັບສິນບັດ | 7 - 9 |
| ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ | 10 |
| ໃບລາຍງານກະແສເງິນສົດ | 11 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 12 – 34 |

# ທະນາຄານພົງສະຫວັນ ຈຳກັດ

## ຂໍ້ມູນທົ່ວໄປຂອງທະນາຄານ

### ທະນາຄານ

ທະນາຄານພົງສະຫວັນ ຈຳກັດ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ") ເປັນທະນາຄານເອກະຊົນ 100% ເຊິ່ງດຳເນີນທຸລະກິດ ແລະ ຈົດທະບຽນຢູ່ໃນ ສປປ ລາວ.

ທະນາຄານໄດ້ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດເລກທີ 04/ທຫລ ອອກໂດຍທະນາຄານແຫ່ງ ສປປ ລາວ ເຊິ່ງມີຜົນບັງຄັບໃຊ້ນັບແຕ່ວັນທີ 2 ກຸມພາ 2007. ໃບອະນຸຍາດແມ່ນມີໄລຍະເວລາໃນການດຳເນີນທຸລະກິດ 1 ປີ ແລະ ຕໍ່ໃໝ່ທຸກໆປີ.

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນໂດຍການຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວຈາກອົງການຈັດຕັ້ງ ແລະ ບຸກຄົນ; ປ່ອຍເງິນກູ້ໄລຍະສັ້ນ, ກາງ, ຍາວ ແລະ ເງິນລ່ວງໜ້າໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນອີງຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ການແລກປ່ຽນເງິນຕາຕ່າງປະເທດ, ການບໍລິການ ການຄ້າລະຫວ່າງປະເທດ, ສ່ວນຫລຸດຂອງເອກະສານທາງການຄ້າ, ພັນທະບັດ ແລະ ເອກະສານທີ່ມີຄ່າອື່ນໆ, ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທຶນຈົດທະບຽນໃນເບື້ອງຕົ້ນແມ່ນ 97,100,000,000 ກີບ. ທຶນຈົດທະບຽນຕົວຈິງນະວັນທີ 31 ທັນວາ 2014 ແມ່ນ 122,786,387,963 ກີບ (31 ທັນວາ 2013: 122,786,387,963 ກີບ).

ສຳນັກງານໃຫຍ່ຂອງທະນາຄານຕັ້ງຢູ່ຖະໜົນ ໄກສອນພົມວິຫານ, ບ້ານ ພະຂາວ, ເມືອງ ໄຊທານີ, ນະຄອນຫລວງວຽງຈັນ. ນະວັນທີ 31 ທັນວາ 2014 ທະນາຄານມີ ໜຶ່ງ (1) ສຳນັກງານໃຫຍ່, ເຈັດ (7) ສາຂາ, ຫ້າ (5) ໜ່ວຍບໍລິການໃນທົ່ວ ສປປ ລາວ.

### ສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງທະນາຄານພາຍໃນປີ ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ ປະກອບມີດັ່ງລຸ່ມນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ/ລາອອກ* |
|---|---|---|
| ທ່ານ ນາງ ດາລີ ພົມເສນາ | ປະທານ | ແຕ່ງຕັ້ງວັນທີ 10 ມີນາ 2014 |
| ດຣ ບຸນເພັງ ວົງເດືອນ | ປະທານ | ແຕ່ງຕັ້ງວັນທີ 07 ມັງກອນ 2012<br>ໝົດວາລະ ວັນທີ 09 ມີນາ 2014 |
| ທ່ານ ທອງສາຍ ອິນທິສານ | ຮອງປະທານ | ແຕ່ງຕັ້ງວັນທີ 07 ມັງກອນ 2012<br>ແຕ່ງຕັ້ງໃໝ່ ວັນທີ 10 ມີນາ 2014 |
| ທ່ານ ນາງ ແສງດາວ ບຸພະກອນຄຳ | ຄະນະ | ແຕ່ງຕັ້ງວັນທີ 07 ມັງກອນ 2012<br>ແຕ່ງຕັ້ງໃໝ່ ວັນທີ 10 ມີນາ 2014 |
| ທ່ານ ໄຊນາລິງ ວົງໄພບູນ | ຄະນະ | ແຕ່ງຕັ້ງວັນທີ 07 ມັງກອນ 2012<br>ແຕ່ງຕັ້ງໃໝ່ ວັນທີ 10 ມີນາ 2014 |
| ທ່ານ ນາງ ມະໂນລາ ຫຼວງໂຄດ | ຄະນະ | ແຕ່ງຕັ້ງວັນທີ 10 ມີນາ 2014 |

# ທະນາຄານພົງສະຫວັນ ຈຳກັດ

## ຂໍ້ມູນທົ່ວໄປຂອງທະນາຄານ (ຕໍ່)

### ຄະນະອຳນວຍການ

ຄະນະອຳນວຍການຂອງທະນາຄານ ພາຍໃນປີ ແລະ ນະວັນທີທີ່ອອກເອກະສານລາຍງານສະບັບນີ້ ປະກອບມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ ນາງ ແສງດາວ ບຸພະກອນຄຳ | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 9 ກັນຍາ 2010 |
| ທ່ານ ບຸນຖັນ ວົງສຸລີ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 21 ກັນຍາ 2010 |
| ທ່ານ ໄພບູນ ພົງສະຫວັນ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 04 ກັນຍາ 2012 |
| ທ່ານ ບຸນປັນ ເນົາວະລາດ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 04 ກັນຍາ 2012 |
| ທ່ານ ສຸດທິເດດ ນາລີວັນ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງວັນທີ 04 ກັນຍາ 2012 |

### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານພາຍໃນປີ ແລະ ຮອດມື້ເຮັດບົດລາຍງານສະບັບນີ້ແມ່ນ ທ່ານ ນາງ ດາລີ ພົນເສນາ - ປະທານສະພາບໍລິຫານ.

ທ່ານ ບຸນຖັນ ວົງສຸລີ, ຮອງຜູ້ອຳນວຍການໃຫຍ່ ແມ່ນໄດ້ຮັບອະນຸຍາດຈາກ ທ່ານ ນາງ ດາລີ ພົນເສນາ ໃນການເຊັນເອກະສານລາຍງານການເງິນ ສຳລັບທ້າຍປີ 31 ທັນວາ 2014.

### ນັກກວດສອບບັນຊີ

ນັກກວດສອບບັນຊີຂອງທະນາຄານແມ່ນບໍລິສັດ ເອີນ ແອນ ຢັງລາວ ຈຳກັດ.

## ທະນາຄານພົງສະຫວັນ ຈຳກັດ

### ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງທະນາຄານ ພົງສະຫວັນ ຈຳກັດ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ") ມີຄວາມຍິນດີນຳສະເໜີເອກະສານລາຍງານການເງິນຂອງທະນາຄານປະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014.

### ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງທະນາຄານ ມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານປະຈຳປີ ໂດຍສອດຄ່ອງກັບກົດໝາຍບັນຊີວິສາຫະກິດຂອງ ສປປ ລາວ ແລະ ລະບຽບການບັນຊີທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ. ໃນການສ້າງເອກະສານລາຍງານການເງິນດັ່ງກ່າວ ຄະນະອຳນວຍການຂອງທະນາຄານຈະຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫລງການບັນດາມາດຕະຖານການບັນຊີທີ່ເໝາະສົມໄດ້ຖືກປະຕິບັດຕາມ, ທຸກຂໍ້ຂັດແຍ່ງ ຫລື ຂໍ້ແຕກຕ່າງທີ່ສຳຄັນໃນການປະຕິບັດຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫລື ຄາດຄະເນວ່າທະນາຄານຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງທະນາຄານຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ສະແດງເຖິງຄວາມຖືກຕ້ອງຢູ່ຕະຫລອດມາ, ຮັບປະກັນວ່າທຸກໆການເຄື່ອນໄຫວ ແລະ ຖານະການເງິນຂອງທະນາຄານ ແລະ ການບັນທຶກບັນຊີແມ່ນສອດຄ່ອງກັບລະບົບບັນຊີທີ່ໄດ້ນຳໃຊ້. ທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງທະນາຄານ ແລະ ຮັບປະກັນວ່າທະນາຄານມີຂັ້ນຕອນຄົ້ນຫາ ແລະ ປ້ອງກັນການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການທະນາຄານ ຢັ້ງຢືນວ່າ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງ ໃນການກະກຽມເອກະສານລາຍງານການເງິນ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014.

### ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການຂໍຮັບຮອງວ່າ ໃນຄຳເຫັນຂອງຄະນະອຳນວຍການ ເອກະສານລາຍງານການເງິນທີ່ໄດ້ຄັດຕິດມາກັບບົດລາຍງານຂອງຄະນະອຳນວຍການສະບັບນີ້ ແມ່ນໄດ້ຖືກນຳສະເໜີຢ່າງຖືກຕ້ອງ ແລະ ເປັນຈິງ ຕາມຖານະການເງິນຂອງທະນາຄານ ນະວັນທີ 31 ທັນວາ 2014, ລວມທັງ ຜົນປະກອບການ ແລະ ກະແສເງິນສົດຂອງທະນາຄານ ພາຍໃນປີ ໂດຍສອດຄ່ອງກັບກົດໝາຍການບັນຊີ ແລະ ລະບຽບການບັນຊີອື່ນໆ ທີ່ອາງອອກໂດຍທະນາຄານແຫ່ງ ສປປລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ການນຳສະເໜີເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຄະນະອຳນວຍການ

ແຂວງ ທະນາຄານ ພົງສະຫວັນ ຈຳກັດ PHONGSAVANH BANK LTD ນະຄອນຫລວງ

ທ່ານ ບຸນຖັນ ອິງສຸລິ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
29 ພຶດສະພາ 2015

Ernst & Young Lao Limited
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : + 856 21 455 077
Fax: + 856 21 455 078
ey.com

Building a better working world

ເລກອ້າງອີງ: 60753097/17292028

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຜູ້ຖືຮຸ້ນ ຂອງທະນາຄານພົງສະຫວັນ ຈຳກັດ,**

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານພົງສະຫວັນ ຈຳກັດ (ຕໍ່ໄປນີ້ເອີ້ນວ່າ "ທະນາຄານ"), ດັ່ງທີ່ໄດ້ລາຍງານໃນໜ້າທີ 6 ຫາ 34, ເຊິ່ງປະກອບດ້ວຍ ໃບສະຫລຸບຊັບສິນບັດ ນະວັນທີ 31 ທັນວາ 2014, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນອື່ນໆ.

***ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ***

ຄະນະອຳນວຍການທະນາຄານມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງຕາມກົດໝາຍການບັນຊີ ແລະ ລະບຽບການ ທີ່ກຳນົດໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ. ແລະ ຮັບຜິດຊອບຕໍ່ການຄຸ້ມຄອງພາຍໃນທີ່ທາງຄະນະອຳນວຍການເຫັນວ່າຈຳເປັນ ເພື່ອໃຫ້ສາມາດກະ ກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ບໍ່ມີການເຊື່ອງອຳ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຂໍ້ຜິດພາດ.

***ຄວາມຮັບຜິດຊອບຂອງນັກກວດສອບ***

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນອອກຄຳເຫັນຕໍ່ເອກະສານລາຍງານການເງິນ ໂດຍອີງຕາມຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍອີງຕາມມາດຕະຖານສາກົນດ້ານການກວດສອບ. ມາດຕະຖານດັ່ງກ່າວໄດ້ກຳນົດໃຫ້ພວກຂ້າພະເຈົ້າຕ້ອງໄດ້ປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ. ພວກຂ້າພະເຈົ້າໄດ້ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນແມ່ນປາສະຈາກຂໍ້ຜິດພາດອັນໃຫ່ຍ.

ການກວດສອບລວມມີຂັ້ນຕອນການດຳເນີນການກວດສອບ, ຫລັກຖານຢັ້ງຢືນກ່ຽວກັບຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ. ຂັ້ນຕອນການຄັດເລືອກຂຶ້ນກັບການພິຈາລະນາຂອງທີມກວດສອບ, ເຊິ່ງລວມເຖິງການປະເມີນຄວາມສ່ຽງຂໍ້ພິດພາດອັນໃຫຍ່ຫລວງໃນເອກະສານລາຍງານການເງິນວ່າເກີດຈາກການສໍ້ໂກງ ຫລື ຍ້ອນການຈົດກ່າຍຜິດ. ໃນການປະເມີນຄວາມສ່ຽງເຫລົ່ານັ້ນ, ນັກກວດສອບໄດ້ພິຈາລະນາເຖິງການຄຸ້ມຄອງພາຍໃນທີ່ພົວພັນເຖິງການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງເພື່ອເປັນແບບແຜນຂັ້ນຕອນການກວດສອບທີ່ສົມເຫດສົມຜົນຕາມສະພາບການ, ແຕ່ບໍ່ແມ່ນເພື່ອຈຸດປະສົງສະແດງຄຳເຫັນທີ່ມີຜົນຕໍ່ການຄຸ້ມຄອງພາຍໃນຂອງທະນາຄານ. ການກວດສອບໄດ້ລວມເອົາທັງການປະເມີນນະໂຍບາຍບັນຊີທີ່ໄດ້ນຳໃຊ້ ແລະ ການຄາດຄະເນອັນເໝາະສົມດ້ານການບັນຊີຂອງຄະນະອຳນວຍການ, ກໍ່ຄືການປະເມີນທັງໝົດຂອງການນຳສະເໜີເອກະສານລາຍງານການເງິນ.

ພວກຂ້າພະເຈົ້າເຊື່ອວ່າຫລັກຖານທີ່ໄດ້ມາຈາກການກວດສອບນັ້ນແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

EY

Building a better working world

***ຄຳເຫັນ***

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ຍຸດຕິທຳກ່ຽວກັບຖານະການເງິນຂອງທະນາຄານພົງສະຫວັນ ນະວັນທີ 31 ທັນວາ 2014 ລວມທັງຜົນການດຳເນີນງານ ແລະ ກະແສເງິນສົດ ສຳລັບປີທີ່ສິ້ນສຸດໃນວັນທີດັ່ງກ່າວ ອີງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ ກຳນົດໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ.

***ບັນຫາທີ່ຄວນເອົາໃຈໃສ່***

ໂດຍປາສະຈາກການອອກຄຳເຫັນແບບມີເງື່ອນໄຂຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ກັບບົດອະທິບາຍຊ້ອນທ້າຍເລກທີ 2.3 - ຄວາມສືບເນື່ອງໃນການດຳເນີນທຸລະກິດ. ນະວັນທີ 31 ທັນວາ 2014, ທະນາຄານມີການຂາດທຶນສະສົມຢູ່ 114,701 ລ້ານກີບ ແລະ ຍອດທຶນທັງໝົດມີພຽງແຕ່ 21,268 ລ້ານກີບ. ເງື່ອນໄຂເຫຼົ່ານີ້ບົ່ງບອກເຖິງຄວາມບໍ່ແນ່ນອນທີ່ອາດສ້າງບັນຫາທີ່ໃຫຍ່ຕໍ່ກັບຄວາມສາມາດຂອງທະນາຄານໃນການສືບເນື່ອງດຳເນີນທຸລະກິດ. ເຖິງຢ່າງໃດກໍ່ຕາມ, ຜູ້ຖືຮຸ້ນຂອງທະນາຄານໄດ້ໃຫ້ການຢັ້ງຢືນໃນການສະໜອງການສະໜັບສະໜູນທາງການເງິນທີ່ຈຳເປັນ ເພື່ອຮັບປະກັນວ່າທະນາຄານຈະມີແຫຼ່ງທຶນທີ່ພຽງພໍໃນການຊຳລະໜີ້ສິ້ນຂອງທະນາຄານເມື່ອຄົບກຳນົດ ແລະ ສຳລັບການສືບຕໍ່ໃນການດຳເນີນທຸລະກິດຂອງປີການຕໍ່ໄປ. ຜູ້ຖືຮຸ້ນຂອງທະນາຄານຍັງຢັ້ງຢືນວ່າຈະບໍ່ຮຽກຮ້ອງໃຫ້ທະນາຄານຈ່າຍຄືນໜີ້ທີ່ຕ້ອງຮັບຈາກທະນາຄານ ຈົນກວ່າທະນາຄານຈະຊຳລະໜີ້ສິ້ນໃຫ້ແກ່ພາກສ່ວນທີ່ສາມສຳເລັດແລ້ວຢ່າງເປັນທີ່ຮຽບຮ້ອຍ, ດັ່ງນັ້ນ ຄະນະອຳນວຍການຂອງທະນາຄານຈຶ່ງໄດ້ກະກຽມເອກະສານລາຍງານການເງິນນີ້ຂຶ້ນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

Ernst & Young Lao

ບໍລິສັດ ເອິນ ແອນ ຢັງ ລາວ ຈຳກັດ ERNST & YOUNG LAO CO.,LTD

ນະຄອນຫຼວງວຽງຈັນ, ສປປ ລາວ

29 ພຶດສະພາ 2015

# ທະນາຄານພົງສະຫວັນ ຈຳກັດ

ໃບລາຍງານຜົນໄດ້ຮັບ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

*ສະກຸນເງິນ: ລ້ານກີບ*

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2014* | *2013* |
|---|---|---|---|---|
| **A.** | **ລາຍຮັບ ແລະ ຄ່າໃຊ້ຈ່າຍສຳລັບການດຳເນີນງານ** | | | |
| 1. | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | 191,154 | 168,708 |
| 2. | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | (123,956) | (108,337) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **67,198** | **60,371** |
| 3 | ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ | 4 | 22,848 | 21,382 |
| 4 | ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 4 | (3,656) | (3,045) |
| **II.** | **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **4** | **19,192** | **18,337** |
| 5 | ກຳໄລຈາກການລົງທຶນໃນຫຼັກຊັບ | | 794 | 236 |
| 6 | ກຳໄລສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ | 5 | 10,609 | 11,593 |
| **III.** | **ລາຍຮັບສຸດທິຈາກການດຳເນີນງານ** | | **97,793** | **90,537** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **7** | **ລາຍຮັບຈາກການດຳເນີນງານອື່ນໆ** | **6** | **9,710** | **5,361** |
| **8** | **ລາຍຈ່າຍໃນການບໍລິຫານ** | | **(71,862)** | **(71,227)** |
| 8.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍໃຫ້ພະນັກງານ | 7 | (46,040) | (42,952) |
| 8.2 | ລາຍຈ່າຍບໍລິຫານອື່ນໆ | 8 | (25,822) | (28,275) |
| **9** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມ** | **16, 17** | **(13,654)** | **(11,382)** |
| **10** | **ລາຍຈ່າຍໃນການດຳເນີນງານອື່ນໆ** | **9** | **(13,066)** | **(6,598)** |
| **11** | **ລາຍຈ່າຍເງິນແຮສຸດທິສຳລັບໜີ້ຕ້ອງຮັບທວງຍາກ** | **14.1** | **12,259** | **(40,958)** |
| 11.1 | ລາຍຈ່າຍເງິນແຮສຳລັບໜີ້ຕ້ອງຮັບທວງຍາກ | | (8,960) | (91,393) |
| 11.2 | ເກັບຄືນເງິນແຮສຳລັບໜີ້ຕ້ອງຮັບທວງຍາກ | | 21,219 | 50,435 |
| **IV.** | **ລວມກຳໄລ/(ຂາດທຶນ)ກ່ອນເສຍອາກອນທັງໝົດ** | | **21,180** | **(34,267)** |
| **12** | **ອາກອນກຳໄລພາຍໃນປີ** | **21** | **-** | **-** |
| **V.** | **ກຳໄລ/(ຂາດທຶນ)ຫລັງອາກອນ** | | **21,180** | **(34,267)** |

ກະກຽມໂດຍ: ອະນຸມັດໂດຍ:

ທະນາຄານ ພົງສະຫວັນ ຈຳກັດ PHONGSAVANH BANK LTD

ທ່ານ ນາງ ກອງແກ້ວ ຄຳຕື້ນ
ຫົວໜ້າການເງິນ

ທ່ານ ບຸນຖົນ ວົງສຸລີ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
29 ພຶດສະພາ 2015

## ທະນາຄານພົງສະຫວັນ ຈຳກັດ

ໃບສະຫຼຸບຊັບສິນບັດ
ນະວັນທີ 31 ທັນວາ 2014

*ສະກຸນເງິນ: ລ້ານກີບ*

| *ລຳດັບ* | *ລາຍການຊັບສິນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2014* | *31 ທັວນວາ 2013* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ ທຫລ** | **10** | **540,535** | **465,149** |
| 1 | ເງິນສົດໃນກຳມື | | 238,059 | 233,832 |
| 2 | ເງິນຝາກກັບ ທຫລ | | 302,476 | 231,317 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | **11** | **124,261** | **172,524** |
| 1 | ເງິນຝາກກະແສລາຍວັນ | | 124,261 | 152,524 |
| 2 | ເງິນຝາກມີກຳນົດ | | - | 20,000 |
| **III** | **ລົງທຶນໃນຫຼັກຊັບ** | **12** | **65,886** | **79,490** |
| 1 | ຫຼັກຊັບປະເພດມີໄວ້ເພື່ອຂາຍ | | - | 36,873 |
| 2 | ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ | | **65,886** | 42,617 |
| **IV** | **ເງິນກູ້ ແລະ ເງິນກູ້ລ່ວງໜ້າໃຫ້ແກ່ລູກຄ້າ, ຫັກເງິນແຮສຳລັບໜີ້ຕ້ອງຮັບທວງຍາກ** | **13** | **1,468,645** | **1,302,047** |
| **V** | **ຊັບສິນບັດຄົງທີ່** | | **170,851** | **164,815** |
| 1 | ການກໍ່ສ້າງພວມດຳເນີນການ ແລະ ຊັບສິນບັດຄົງທີ່ພວມຊື້ | 15 | 32,079 | 53,321 |
| 2 | ຊັບສິນບັດຄົງທີ່ມີຕົວຕົນ | 16 | 106,505 | 80,013 |
| 3 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 17 | 32,267 | 31,481 |
| **VI** | **ຊັບສິນອື່ນໆ** | **18** | **88,570** | **74,424** |
| 1 | ໜີ້ຕ້ອງຮັບຈາກດອກເບ້ຍຄ້າງຮັບ | | 24,719 | 12,397 |
| 2 | ໜີ້ຕ້ອງຮັບຈາກອາກອນກຳໄລ | | 3,173 | 4,556 |
| 3 | ຊັບສິນອື່ນໆ | | 60,731 | 57,870 |
| 4 | ເງິນແຮຈາກຊັບສິນອື່ນໆ | | (53) | (399) |
| | **ລວມຊັບສິນທັງໝົດ** | | **2,458,748** | **2,258,449** |

## ທະນາຄານພົງສະຫວັນ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2014

*ສະກຸນເງິນ: ລ້ານກີບ*

| *ລຳດັບ* | *ລາຍການໜີ້ສິນ ແລະ ທຶນ* | *ບົດອະທິບາຍ ເລກທີ* | *31 ທັນວາ 2014* | *31 ທັນວາ 2013* |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | **19** | **15,557** | **9,498** |
| 1 | ເງິນຝາກກະແສລາຍວັນ | | 831 | - |
| 2 | ເງິນຝາກມີກຳນົດ | | - | 888 |
| 3 | ໜີ້ຕ້ອງສົ່ງອື່ນໆໃຫ້ແກ່ທະນາຄານອື່ນ | | 14,726 | 8,610 |
| **II** | **ໜີ້ຕ້ອງສົ່ງລູກຄ້າ** | **20** | **2,347,467** | **2,188,881** |
| 1 | ເງິນຝາກກະແສລາຍວັນ ແລະ ເງິນຝາກປະຈຳວັນ | | 195,036 | 137,506 |
| 2 | ເງິນຝາກປະຢັດ | | 806,472 | 824,211 |
| 3 | ເງິນຝາກມີກຳນົດ | | 1,345,959 | 1,227,164 |
| **V** | **ໜີ້ສິນອື່ນໆ** | | **74,456** | **56,271** |
| 1 | ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 61,974 | 49,240 |
| 2 | ໜີ້ຕ້ອງສົ່ງອາກອນກຳໄລ | 21 | - | - |
| 3 | ໜີ້ສິນອື່ນໆ | 22 | 12,482 | 7,031 |
| | **ລວມໜີ້ສິນ** | | **2,437,480** | **2,254,650** |
| **VI** | **ທຶນ ແລະ ຄັງແຮ** | | | |
| 1 | ທຶນຈົດທະບຽນ | 23 | 122,786 | 122,786 |
| 2 | ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ | 14.2 | 13,183 | 9,519 |
| 3 | ຄັງສະສົມຕາມລະບຽບການ | | - | - |
| 4 | ຂາດທຶນສະສົມ | | (114,701) | (128,506) |
| | **ລວມທຶນ** | | **21,268** | **3,799** |
| | **ລວມທຶນ ແລະ ໜີ້ສິນ** | | **2,458,748** | **2,258,449** |

# ທະນາຄານພົງສະຫວັນ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2014

*ສະກຸນເງິນ: ລ້ານກີບ*

| *ລຳດັບ* | *ລາຍການນອກໃບສະຫລຸບຊັບສິນບັດ* | *ບົດອະທິບາຍ ເລກທີ* | *31 ທັນວາ 2014* | *31 ທັນວາ 2013* |
|---|---|---|---|---|
| I | **ຄຳໝັ້ນສັນຍາທີ່ໄດ້ໃຫ້** | | | |
| A | **ຄຳໝັ້ນສັນຍາກ່ຽວກັບການສະໜອງທຶນໄດ້ໃຫ້** | | **4,829** | **25** |
| 1 | ຄຳໝັ້ນສັນຍາສະໜອງທຶນທີ່ໃຫ້ກັບທະນາຄານອື່ນ | | 4,829 | 25 |
| B | **ຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້** | | **-** | **-** |
| 1 | ຄຳໝັ້ນສັນຍາຄ້ຳປະກັນທີ່ໄດ້ໃຫ້ແກ່ລູກຄ້າ | | - | - |
| | **ລວມຍອດຂໍ້ຜູກພັນ** | | **4,829** | **25** |
| II | **ຫຼັກຊັບຄ້ຳປະກັນ ແລະ ການຈິດຈຳນອງ** | | | |
| A | **ຫລັກຊັບຄ້ຳປະກັນ ແລະ ການຈິດຈຳນອງສຳລັບເງິນກູ້** | | **5,921,264** | **2,348,625** |
| 1 | ຫລັກຊັບຄ້ຳປະກັນ ແລະ ການຈິດຈຳນອງສຳລັບເງິນກູ້ໃຫ້ລູກຄ້າ | | 5,921,264 | 2,348,625 |
| | **ລວມຍອດຫຼັກຊັບຄ້ຳປະກັນ ແລະ ການຈິດຈຳນອງ** | | **5,921,264** | **2,348,625** |

ກະກຽມໂດຍ:

ທ່ານ ນາງ ກອງແກ້ວ ຄຳຕື້ນ
ຫົວໜ້າການເງິນ

ອະນຸມັດໂດຍ:

ທ່ານ ບຸນຖຸ້ນ ວົງສຸລີ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
29 ພຶດສະພາ 2015

## ທະນາຄານພົງສະຫວັນ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

| | ທຶນຈົດທະບຽນ<br>ລ້ານກີບ | ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ<br>ລ້ານກີບ | ຂາດທຶນສະສົມ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|---|
| **ຍອດເຫລືອ ນະວັນທີ 31 ທັນວາ 2012** | **122,786** | **6,221** | **(94,383)** | **34,624** |
| ຂາດທຶນສຸດທິພາຍໃນປີ | - | - | (34,267) | (34,267) |
| ສ່ວນປ່ຽນແປງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ | - | 3,388 | - | 3,388 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | (90) | 144 | 54 |
| **ຍອດເຫລືອ ນະວັນທີ 31 ທັນວາ 2013** | **122,786** | **9,519** | **(128,506)** | **3,799** |
| ເງິນປັນຜົນທີ່ຈ່າຍໃຫ້ຜູ້ຖືຮຸ້ນ | - | - | (5,000) | (5,000) |
| ກຳໄລສຸດທິໃນປີ | - | - | 21,180 | 21,180 |
| ສ່ວນປ່ຽນແປງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ | - | 3,643 | - | 3,643 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | 21 | - | 21 |
| ຈ່າຍອາກອນກຳໄລເພີ່ມເຕີມສຳລັບປີ 2013 | - | - | (2,375) | (2,375) |
| **ຍອດເຫຼືອ ນະວັນທີ 31 ທັນວາ 2014** | **122,786** | **13,183** | **(114,701)** | **21,268** |

ກະກຽມໂດຍ:

ທ່ານ ນາງ ກອງແກ້ວ ຄຳຕັ້ນ
ຫົວໜ້າການເງິນ

ອະນຸມັດໂດຍ

ທ່ານ ບຸນສັນ ວົງສຸລິ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
29 ພຶດສະພາ 2015

# ທະນາຄານພົງສະຫວັນ ຈຳກັດ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2014

| | ບົດອະທິບາຍ ເລກທີ | 2014 ລ້ານກີບ | 2013 ລ້ານກີບ |
|---|---|---|---|
| **ກຳໄລ/(ຂາດທຶນ) ສຸດທິກ່ອນອາກອນ** | | **21,180** | **(34,267)** |
| *ດັດແກ້ສຳລັບ:* | | | |
| ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມ | 16,17 | 13,654 | 11,382 |
| ເງິນແຮສຳລັບການສູນເສຍເງິນກູ້ລວມ | 14 | (8,616) | 44,347 |
| ເງິນແຮສຳລັບຊັບສິນອື່ນໆ | 18 | 53 | 399 |
| **ກະແສເງິນສົດຈາກກຳໄລຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **26,271** | **21,861** |
| (ເພີ່ມຂຶ້ນ)/ຫລຸດລົງຂອງຊັບສິນຈາກການດຳເນີນງານ | | | |
| ເງິນຝາກຢູ່ກັບທະນາຄານອື່ນ | | 38,754 | (21,246) |
| ເງິນກູ້ໃຫ້ລູກຄ້າ | | (154,521) | (211,219) |
| ຊັບສິນອື່ນໆ | | (15,379) | (21,230) |
| ເພີ່ມຂຶ້ນ/(ຫລຸດລົງ) ໃນໜີ້ສິນຈາກການດຳເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 6,059 | (6,800) |
| ເງິນຝາກຂອງລູກຄ້າ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 158,586 | 441,803 |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | 21 | (992) | (6,507) |
| ໜີ້ສິນອື່ນໆ | | 18,185 | 15,759 |
| **ກະແສເງິນສົດສຸດທິທີ່ນຳໃຊ້ໃນການດຳເນີນງານ** | | **76,963** | **212,421** |
| **ກິດຈະກຳການລົງທຶນ** | | | |
| ການຈັດຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່ ແລະ ຊັບສິນໄລຍະຍາວ ອື່ນໆ | 16,17 | (19,690) | (17,995) |
| ການລົງທຶນໃສ່ຫລັກຊັບໃໝ່ພາຍໃນປີ | | (23,269) | (61,105) |
| ຫຼັກຊັບທີ່ຄົບກຳນົດ ແລະ ຈ່າຍຄືນພາຍໃນປີ | | 36,873 | - |
| **ກະແສເງິນສົດສຸດທິຈາກ/(ໃຊ້ໃນ) ກິດຈະກຳການລົງທຶນ** | | **(6,086)** | **(79,100)** |
| **ກິດຈະກຳການຈັດຫາເງິນ** | | | |
| ເງິນປັນຜົນທີ່ຈ່າຍໃຫ້ຜູ້ຖືຮຸ້ນ | | (5,000) | - |
| **ກະແສເງິນສົດສຸດທິຈາກກິດຈະກຳການຈັດຫາເງິນ** | | **(5,000)** | **-** |
| **ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **65,877** | **133,321** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **477,928** | **344,531** |
| **ສ່ວນຜິດດ່ຽງອັດຕາແລກປ່ຽນ** | | - | 76 |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **24** | **543,805** | **477,928** |

ກະກຽມໂດຍ: ຮັບຮອງໂດຍ

ທະນາຄານ ພົງສະຫວັນ ຈຳກັດ PHONGSAVANH BANK LTD ແຂວງ ນະຄອນຫລວງ

ທ່ານ ນາງ ກອງແກ້ວ ຄຳຕົ້ນ
ຫົວໜ້າການເງິນ

ທ່ານ ບຸນຖັນ ວົງສຸລີ
ຮອງຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
29 ພຶດສະພາ 2015